ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

------===000===------

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ
628 ບ້ານ: ໂພນພະເນົາ ກມ5
ຖະໜົນ: ໄກສອນພົມວິຫານ ເມືອງ: ໄຊເສດຖາ
ນະຄອນຫຼວງວຽງຈັນ ໂທ-ແຟັກ:(+856 21)418062 – 6

ເລກທີ: 0294/22 ມຫທຊ
ນະຄອນຫຼວງວຽງຈັນ, ວັນທີ: 30 ພະຈິກ 2022

ແຈ້ງການ

ເຖິງ: ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ,
ທ່ານຜູ້ອຳນວຍການໃຫຍ່ຕະຫຼາດຫຼັກຊັບລາວ
ບັນດາຜູ້ຖືຮຸ້ນຂອງບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ

ເລື່ອງ: ແຈ້ງກ່ຽວກັບການໂຈະການຊື້-ຂາຍຮຸ້ນໃນວັນທີ 09-13 ທັນວາ 2022, ເພື່ອປ່ຽນແປງມູນຄ່າກຳນົດຂອງຮຸ້ນຈາກ 1,000 ກີບຕໍ່ຮຸ້ນ ເປັນ 100 ກີບຕໍ່ຮຸ້ນ ແລະ ສາມາດກັບມາຊື້-ຂາຍຮຸ້ນໄດ້ໃນວັນທີ 14 ທັນວາ 2022.

- ອີງຕາມ ການແຈ້ງຕອບ ການທົບທວນເອກະສານກ່ຽວກັບການປ່ຽນແປງມູນຄ່າກຳນົດ,ເລກທີ1628/ຕລຊລ ລົງວັນທີ 29 ພະຈິກ 2022.
- ອີງຕາມ ມະຕິກອງປະຊຸມວິສາມັນຜູ້ຖືຮຸ້ນ ຄັ້ງທີ 1 ປະຈຳປີ 2020, ສະບັບເລກທີ 2012004/ມຫທຊ, ລົງວັນທີ 04 ທັນວາ.

ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ (ມຫທຊ) ຂໍຖືເປັນກຽດແຈ້ງມາຍັງ ບັນດາຜູ້ຖືຮຸ້ນຂອງ ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ ກ່ຽວກັບການໂຈະການຊື້-ຂາຍຮຸ້ນໃນວັນທີ 09-13 ທັນວາ 2022, ເພື່ອ ປ່ຽນແປງມູນຄ່າກຳນົດຂອງຮຸ້ນຈາກ 1,000 ກີບຕໍ່ຮຸ້ນ ເປັນ 100 ກີບຕໍ່ຮຸ້ນ. ທັ້ງນີ້ ຕັ້ງແຕ່ ວັນທີ 14 ທັນວາ 2022 ເປັນຕົ້ນໄປ ມູນຄ່າກຳນົດຂອງຮຸ້ນ ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ ທີ່ຊື້-ຂາຍໃນຕະຫຼາດຫຼັກຊັບ ລາວ ຈະເປັນ 100 ກີບຕໍ່ຮຸ້ນ ໂດຍຈຳນວນ ແລະ ລາຄາຮຸ້ນຂອງ ບໍລິສັດ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ ກໍຖືກ ປັບປ່ຽນເຊັ່ນດ່ຽວກັນ.

ດັ່ງນັ້ນ, ຈຶ່ງຂໍແຈ້ງມາຍັງທ່ານເພື່ອຮັບຊາບ.

ສະມາຊິກສະພາບໍລິຫານ/ຜູ້ອຳນວຍການໃຫ່ຍ

ບລສ ມະຫະທຶນ ເຊົ່າສິນເຊື່ອ ມະຫາຊົນ MAHATHUEN LEASING PUBLIC COMPANY

ໝວງ(ທ່ານ ມານິບ ຕຣີລິດວິໄລ)